# ສຶກສາຜົນກະທົບຂອງການລະບາດຂອງພະຍາດ Covid-19 ຕໍ່ກັບລາຍຮັບຜູ້ປະກອບການ ໂຮງແຮມ ແລະ ເຮືອນພັກ ໃນເມືອງວັງວຽງ ແຂວງວຽງຈັນ

# Study the Impact of Covid-19 on the Income of Hotels and Guesthouses in Vang Vieng District, Vientiane Province

ກ້ຽງຄໍາ ຄໍາວິລະວັນ[1], ນິວັນ ສາຍນາວົງ[2], ວິສັນສັກ ຄໍາແພງວົງ[3], ປູເປ້ ບຸນນະສິນ[4], ໄມວ່າງວື່[5]

## ບົດຄັດຫຍໍ້

ການສຶກສາ "ຜົນກະທົບຂອງຂອງການລະບາດຂອງພະຍາດ Covid-19 ຕໍ່ລາຍຮັບຜູ້ປະກອບການຂອງໂຮງແຮມ ແລະ ເຮືອນພັກ ໃນເຂດເທດສະບານເມືອງວັງວຽງ ແຂວງວຽງຈັນ" ເປັນການສຶກສາທີ່ມີຈຸດປະສົງຫຼັກແມ່ນ ສຶກສາຜົນກະທົບຂອງການລະບາດຂອງພະຍາດ Covid-19 ຕໍ່ລາຍຮັບຜູ້ປະກອບການໂຮງແຮມ ແລະ ເຮືອນພັກໃນເທດສະບານເມືອງວັງວຽງ ແຂວງວຽງຈັນ. ການສຶກສາຄັ້ງນີ້ທີມງານຜູ້ສຶກສາໄດ້ນໍາໃຊ້ແບບຈໍາລອງໂພຣບິດແບບຮຽງລໍາດັບ (Ordered Probit model) ແລະ ຄາດປະມານຜົນກະທົບສ່ວນເພີ່ມ (Marginal effects) ສໍາລັບຄວາມແຕກຕ່າງລະຫວ່າງ 2 ກຸ່ມຂຶ້ນໄປ ໃນການປະມານຄ່າຄວາມສ່ຽງຂອງໂອກາດທີ່ຈະເກີດຂຶ້ນໃນແຕ່ລະລະດັບທາງເລືອກຂອງລະດັບຜົນກະທົບຕໍ່ລາຍຮັບລວມທີ່ເກີດຈາກຂອງການລະບາດຂອງພະຍາດ Covid-19. ຜົນໄດ້ຮັບຈາກການສຶກສາໄດ້ພົບວ່າ: ປັດໄຈທີ່ເຮັດໃຫ້ທຸລະກິດໄດ້ຮັບຜົນກະທົບໜ້ອຍ ຫຼື ຫຼາຍນັ້ນຂຶ້ນກັບໄລຍະການດໍາເນີນທຸລະກິດ, ຮູບແບບການດໍາເນີນທຸລະກິດ, ລັກສະນະທຸລະກິດ, ຢູ່ຕິດທາງໃຫຍ່ ແລະ ມີບັນຊີໃນ web Agoda.

**ຄໍາສັບສໍາຄັນ:** ຜົນກະທົບຂອງການລະບາດຂອງ ໂຄວິດ-19, ຜູ້ປະກອບການ, ບ້ານພັກ, ໂຮແຮມ

---

[1] ພາກວິຊາການຄ້າ, ຄະນະເສດຖະສາດ ແລະ ບ ລິຫານທຸລະກິດ, Email: k.khamvilvanh@nuol.edu.la

[2] ພາກວິຊາການຄ້າ, ຄະນະເສດຖະສາດ ແລະ ບ ລິຫານທຸລະກິດ, Email: n.saynavong@nuol.edu.la

[3] ພະແນກຄົ້ນຄວ້າວິທະຍາສາດ, ຄະນະເສດຖະສາດ ແລະ ບ ລິຫານທຸລະກິດ, Email:: v.khamphengvong@nuol.edu.la

[4] ນັກສຶກສາລະດັບປະລິນຍາຕີ ສາຂາການຄ້າ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, Email: pupey.7788@gmail.com

[5] ນັກສຶກສາລະດັບປະລິນຍາຕີ ສາຂາການຄ້າ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, Email: maivangvue83@gmail.co

## Abstract

The study “Impact of Covid-19 Outbreak on the Income of Hotel and Guesthouse Entrepreneurs in Vang Vieng district, Vientiane Province” has the main purpose of this study to analysis the impact of the Covid-19 Outbreak on the Revenue of Hotel and Guesthouse Operators in Vang Vieng District, Vientiane Province. In this study, the research team used the Ordered Probit model and Marginal effects to estimate the risk of each option at the optional level of the total revenue impact of the Covid-19 outbreak. The results of the study found that, the factors affecting on business performance as the business life, business network, business operating model, the proximity to the main road and the presence of an account on web Agoda



**Keywords**: Impact of COVID_19, hotels, guesthouses

## I. ພາກສະເໜີ

### 1.1 ທີ່ມາ ແລະ ຄວາມສຳຄັນຂອງບັນຫາ

Covid-19 (Coronavirus Disease 2019) ເປັນໂລກລະບາດຮ້າຍແຮງຊະນິດໜຶ່ງ ຈາກການແຜ່ລະບາດທີ່ກະຈາຍໄປໃນຫຼາຍໆປະເທດທົ່ວໂລກ ເຊິ່ງສົ່ງຜົນກະທົບອັນຮ້າຍແຮງໃຫ້ແກ່ການຂະຫຍາຍໂຕຂອງເສດຖະກິດໃນທົ່ວໂລກ. ການເດີນທາງ ແລະ ການທ່ອງທ່ຽວແມ່ນໜຶ່ງ ໃນບັນດາຂະແໜງການທີ່ໄດ້ຮັບຜົນກະທົບຫຼາຍທີ່ສຸດ ໂດຍສະເພາະແມ່ນການທ່ອງທ່ຽວເດີນທາງໂດຍອາກາດ ແລະ ພາກພື້ນດິນ. ໃນຄວາມເສຍຫາຍທີ່ບໍ່ເຄີຍມີມາກ່ອນ ສຳລັບຂະແໜງການທ່ອງທ່ຽວ, ພະຍາດລະບາດ Covid-19 ໄດ້ເຮັດໃຫ້ຈຳນວນນັກທ່ອງທ່ຽວໃນໄຕມາດ ທຳອິດຂອງປີ 2020 ຫຼຸດລົງ 22.7 ສ່ວນຮ້ອຍ ຈາກຊ່ວງເວລາດຽວກັນຂອງປີ 2019 (World Tourism Organization, 2020). ການຫຼຸດລົງຂອງຈຳນວນນັກທ່ອງທ່ຽວດັ່ງກ່າວເປັນປະກົດການທີ່ບໍ່ເຄີຍເກີດຂຶ້ນໃນປະຫວັດສາດການທ່ອງທ່ຽວໂລກຕັ້ງແຕ່ເລີ່ມມີການຮອບຮວມຂໍ້ມູນໃນປີ 1950 ແລະ ຖືເປັນຊ່ວງຕົກຕໍ່າທີ່ສຸດໃນ 10 ປີທີ່ຜ່ານມາຫຼັງຈາກວິກິດການທາງການເງິນຂອງໂລກໃນປີ 2009 ແລະ ແນ່ນອນວ່າປັດໄຈສຳຄັນທີ່ສຸດຄື ຜົນກະທົບທີ່ເກີດຈາກການລະບາດຂອງໄວຣັດ Covid-19 ທີ່ເລີ່ມມີມາຕັ້ງແຕ່ທ້າຍເດືອນທັນວາປີ 2019 ຈົນເຖິງປັດຈຸບັນ ຍັງຄົງມີການລະບາດຢ່າງຕໍ່ເນື່ອງໄປທົ່ວໂລກໃນ 215 ປະເທດດ້ວຍຈຳນວນຜູ້ຕິດເຊື້ອສະສົມທັງໝົດເກືອບ 10 ລ້ານຄົນ ແລະ ມີຜູ້ເສຍຊີວິດຈຳນວນ 0.48 ລ້ານຄົນ ຄິດເປັນ 5.08 ສ່ວນຮ້ອຍ ໂດຍສະເພາະປະເທດສະຫະລັດອາເມລິກາທີ່ມີຈຳນວນຜູ້ຕິດເຊື້ອຫຼາຍເປັນອັນດັບໜຶ່ງຂອງໂລກ ຮອງລົງມາແມ່ນປະເທດບຣາຊິວ, ຣັດເຊຍ, ອິນເດຍ, ສະເປນ, ເປຣູ, ຊິລີ ແລະ ອິຕາລີ. ການລະບາດຂອງພະຍາດ Covid-19 ນີ້ໄດ້ສົ່ງຜົນໃຫ້ມີຈຳນວນນັກທ່ອງທ່ຽວລະຫວ່າງປະເທດທີ່ເດີນທາງໄປພູມພາກອາຊີ ແລະ ປາຊີຟິກຫຼຸດລົງສູງສຸດເຖິງ 34.8 ສ່ວນຮ້ອຍ ຮອງລົງມາໄດ້ແກ່ນັກທ່ອງທ່ຽວລະຫວ່າງປະເທດທີ່ເດີນທາງໄປຍັງປະເທດໃນທະວີບຢູໂຣບຫຼຸດລົງ 18.0 ສ່ວນຮ້ອຍ ນັກທ່ອງທ່ຽວລະຫວ່າງປະເທດທີ່ເດີນທາງໄປຕາເວັນອອກກາງ, ທະວີບອາເມລິກາ ແລະ ອາຟຣິກາຫຼຸດລົງເຊັ່ນກັນໃນອັດຕາ 19.7 ສ່ວນຮ້ອຍ, 16.2 ສ່ວນຮ້ອຍ ແລະ 13.6 ສ່ວນຮ້ອຍຕາມລຳດັບ. ການແຜ່ລະບາດຂອງພະຍາດ Covid-19 ມີຄວາມຮຸນແຮງ ແລະ ກະຈາຍໄປຍັງປະເທດຕ່າງໆທົ່ວໂລກຫຼາຍຂຶ້ນ ແລະ ນັບເປັນຄັ້ງທຳອິດທີ່ທຸກປະເທດທີ່ເປັນຈຸດໝາຍປາຍທາງທົ່ວໂລກຕ່າງດຳເນີນມາດຕະການຈຳກັດການເດີນທາງແລະ ປິດສະໜາມບິນ ຫ້າມການເດີນທາງເຂົ້າມາຂອງນັກທ່ອງທ່ຽວຕ່າງຊາດໄປຈົນເຖິງການປິດເຂດແດນຂອງປະເທດຕົນ.

ສຳລັບ ສປປ ລາວ, ການແຜ່ລະບາດຂອງພະຍາດ Covid-19 ເບື້ອງຕົ້ນ ແມ່ນສົ່ງຜົນກະທົບຕໍ່ກັບທຸລະກິດ ແລະ ແຮງງານ ທີ່ຢູ່ໃນຂະແໜງການທ່ອງທ່ຽວ, ການບໍລິການຂົນສົ່ງ, ອຸດສະຫະກຳປຸງແຕ່ງ ແລະ ກໍ່ສ້າງ. ເນື່ອງມາຈາກນະໂຍບາຍການຈຳກັດການເດີນທາງ ຕະຫຼອດຮອດການຈຳກັດການດຳເນີນກິດຈະກຳຕ່າງໆ ການແຜ່ລະບາດທີ່ຕໍ່ເນື່ອງຂອງພະຍາດ Covid-19 ມາຮອດທ້າຍໄຕມາດທີ 1 ຂອງປີ 2020 ໄດ້ເລີ່ມສົ່ງຜົນກະທົບຕໍ່ຂະແໜງການອື່ນໆ ທັງໃນດ້ານອຸປະສົງ ແລະ ອຸປະທານ ໃນລັກສະນະດຽວກັນ. ອີງຕາມການປະເມີນຂອງທະນາຄານໂລກ ໃນເດືອນເມສາ 2020 ເຫັນວ່າ ການຂະຫຍາຍໂຕຂອງເສດຖະກິດຂອງ ສປປ ລາວ ຫຼຸດລົງຈາກປະມານ 6 ສ່ວນຮ້ອຍໃນຊຸມປີຜ່ານມາ ລົງມາເປັນ 3.6 ສ່ວນຮ້ອຍ ໃນປີ 2020 (WB, 2020).

ອີງຕາມການສຳຫຼວດຜົນກະທົບຂອງພະຍາດ Covid-19 ຕໍ່ທຸລະກິດ ໂດຍສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ໃນເດືອນເມສາ 2020 ທີ່ມີຜູ້ປະກອບການເຂົ້າຮ່ວມຕອບແບບສອບຖາມ 474 ຄົນ. ການສຳຫຼວດດັ່ງກ່າວສາມາດສະຫຼຸບໃຫ້ເຫັນໄດ້ວ່າ ອີງໃສ່ສະຖານະການ ການແຜ່ລະບາດຂອງພະຍາດ Covid-19 ຕໍ່ການດຳເນີນທຸລະກິດ, ມີເຖິງ 36 ສ່ວນຮ້ອຍ ຂອງຜູ້ປະກອບການທີ່ເຫັນວ່າຕົນເອງມີຄວາມສ່ຽງ 100 ສ່ວນຮ້ອຍ ທີ່ຈະຕ້ອງເຊົາກິດຈະກຳ, ຖ້າຫາກສົມທຽບຄວາມສ່ຽງດັ່ງກ່າວ ລະຫວ່າງທຸລະກິດທີ່ນຳໂດຍຜູ້ປະກອບການຍິງ ແລະ ຊາຍ ເຫັນວ່າ ຜູ້ປະການຍິງຄາດວ່າຕົນເອງຈະມີຄວາມສ່ຽງສູງທີ່ຈະຕ້ອງຢຸດເຊົາກິດຈະກຳ ຫຼາຍກວ່າຜູ້ປະກອບການຊາຍ. ຖ້າຫາກສົມທຽບຜົນກະທົບຂອງການແຜ່ລະບາດຂອງ Covid-19

ລະຫວ່າງຂະແໜງທຸລະກິດຕ່າງໆ ໃນດ້ານຄວາມສ່ຽງທີ່ອາດຈະຕ້ອງປຸດເຊົາກິດຈະກຳ ແມ່ນເຫັນໄດ້ວ່າ ຜູ້ປະກອບການໃນຂະແໜງ " ການຂົນສົ່ງ ແລະ ສາງສິນຄ້າ" ແລະ "ການບໍລິການທີ່ພັກເຊົາ ແລະ ຮ້ານອາຫານ" ເຫັນວ່າຕົນເອງມີຄວາມສ່ຽງສູງທີ່ຈະຕ້ອງປຸດເຊົາກິດຈະການ ຫຼາຍກວ່າຂະແໜງການອື່ນໆ. ໃນດ້ານຜົນກະທົບທາງດ້ານແຮງງານ, ຜົນຮັບຈາກການສຳຫຼວດ ສະແດງໃຫ້ເຫັນວ່າ ເກືອບ 40 ສ່ວນຮ້ອຍ ຂອງຜູ້ປະກອບການຄາດວ່າ ຕົນເອງຈະຕ້ອງໄດ້ປົດພະນັກງານອອກເກີນເຄິ່ງໜຶ່ງຂອງຈຳນວນພະນັກງານ ທັງໝົດຂອງຕົນ. ເຊິ່ງຖ້າຫາກປຽບທຽບລະຫວ່າງຂະແໜງ ການທຸລະກິດຕ່າງໆ ຈະເຫັນວ່າ ຜູ້ປະກອບການໃນແໜງທຸລະກິດທີ່ຕິດພັນກັບການທ່ອງທ່ຽວຄືໃນຂະແໜງ "ການບໍລິການທີ່ພັກເຊົາ ແລະ ອາຫານ" ແລະ "ສິລະປະ, ການບັນເທີງ ແລະ ພັກຜ່ອນ" ໂດຍສະເລ່ຍແລ້ວປະເມີນວ່າຈະມີການປົດພະນັກງານຂອງຕົນອອກຫຼາຍກວ່າຂະແໜງການອື່ນໆ ຄື ປົດພະນັກງານອອກເກີນ 50 ສ່ວນຮ້ອຍ ຂອງພະນັກງານຂອງຕົນ. ໃນດ້ານຜົນກະທົບຕໍ່ກັບລາຍຮັບຈາກການດຳເນີນທຸລະກິດ ໃນຊວງໄລຍະໄຕມາດທີ 1 ຂອງປີ 2020 ທຽບກັບລາຍຮັບຂອງ ໄຕມາດທີ 1 ຂອງປີ 2019, ເຫັນວ່າ ມີຜູ້ປະກອບການເຖິງ 27 ສ່ວນຮ້ອຍ ທີ່ມີລາຍຮັບຫຼຸດລົງເກີນ 80 ສ່ວນຮ້ອຍ ເມື່ອທຽບກັບລາຍຮັບຂອງປີ 2019, ເຊິ່ງ ຖ້າສົມທຽບຄ່າສະເລ່ຍສ່ວນຮ້ອຍຂອງຜົນກະທົບຂອງລາຍຮັບ ຂອງແຕ່ລະຂະແໜງການຈະເຫັນວ່າມີຜົນກະທົບ ຄ້າຍຄືກັບຜົນກະທົບດ້ານແຮງງານ ຄື ຜູ້ປະກອບການໃນຂະແໜງທີ່ຕິດພັນກັບການທ່ອງທ່ຽວ ຄື ຜູ້ປະກອບການໃນຂະແໜງ "ສິລະປະ, ການບັນເທີງ ແລະ ພັກຜ່ອນ" ແລະ "ການບໍລິການທີ່ພັກເຊົາ ແລະ ຮ້ານອາຫານ" ໂດຍສະເລ່ຍແລ້ວ ປະເມີນວ່າຕົນເອງຈະມີລາຍຮັບ ຈາກການດຳເນີນທຸລະກິດຂອງໄຕມາດທີ 1 ປີ 2020 ທຽບກັບໄຕມາດດຽວກັນຂອງປີ 2019 ຫຼຸດລົງຫຼາຍກວ່າຂະແໜງການອື່ນໆຄື ຫຼຸດລົງ 58 ສ່ວນຮ້ອຍ ແລະ 53 ສ່ວນຮ້ອຍ ຕາມລຳດັບ.

ເມືອງວັງວຽງກໍ່ເປັນເມືອງໜຶ່ງຂອງແຂວງວຽງຈັນ ມີປະຊາກອນອາໄສຢູ່ເມືອງວັງວຽງ 58,807 ຄົນ (2018), ຜ່ານການຈັດຕັ້ງປະຕິບັດວຽກງານສົ່ງເສີມການທ່ອງທ່ຽວເຊິ່ງປະຈຸບັນ ການທ່ອງທ່ຽວໄດ້ກາຍເປັນປັດໄຈສຳຄັນຕໍ່ກັບລະບົບເສດຖະກິດ, ສັງຄົມ, ວັດທະນະທຳ ແລະ ສິ່ງແວດລ້ອມຂອງເມືອງວັງວຽງ. ສະແດງອອກໃນດ້ານຕົວເລກສະຖິຕິຄື: ນັບແຕ່ປີ 1997 ມີນັກທ່ອງທ່ຽວເຂົ້າມາທ່ຽວເມືອງວັງວຽງພຽງແຕ່ 4,468 ເທື່ອຄົນ, ມາຮອດປີ 2010 ມີນັກທ່ອງທ່ຽວຈຳນວນ 156.412 ຄົນ, ເຊິ່ງຕົວເລກດັ່ງກ່າວແມ່ນໄດ້ເພີ່ມຂຶ້ນ 35 ເທົ່າຖ້າທຽບໃສ່ກັບປີ 1997 ແລະ ໃນປີ 2012 ມີຈຳນວນນັກທ່ອງທ່ຽວ 148,696 ຄົນ, ໃນປີ 2013 ຈຳນວນຄົນ 167,444 ຄົນ, ໃນປີ 2014 ມີຈຳນວນ 140,071 ຄົນ, ໃນປີ 2015 ມີຈຳນວນ 170,928 ຄົນ ແລະ ປີ 2016 ມີຈຳນວນ 183,245 ຄົນ ແລະ ອີງຕາມການລາຍງານຂອງຫ້ອງການທ່ອງທ່ຽວເມືອງວັງວຽງປະມານ 60 ສ່ວນຮ້ອຍຂອງລາຍຮັບທັງໝົດຂອງເມືອງວັງວຽງແມ່ນມາຈາກວຽກງານການທ່ອງທ່ຽວເຊັ່ນ : ຈາກການຂະຫຍາຍຕົວຂອງສະຖານທີ່ພັກໂຮງແຮມ, ເຮືອນພັກ, ແຫຼ່ງທ່ອງທ່ຽວໂດຍສະເພາະທຸລະກິດເຮືອນພັກ.

ຈາກທີ່ມາ ແລະ ຄວາມສຳຄັນຂອງບັນຫາທີ່ກ່າວມາຂ້າງເທິງ ທີມງານຜູ້ສຶກສາຈຶ່ງມີຄວາມສົນໃຈວ່າ: *ການລະບາດຂອງພະຍາດ Covid-19 ໄດ້ສົ່ງຜົນກະທົບຕໍ່ລາຍຮັບຂອງຜູ້ປະກອບການໂຮງແຮມ ແລະ ເຮືອນພັກ ໃນເຂດເທດສະບານເມືອງວັງວຽງ ແຂວງວຽງຈັນ ແນວໃດ?*

### 1.2 ຈຸດປະສົງຂອງການສຶກສາ

ເພື່ອໃຫ້ໄດ້ມາເຊິ່ງຄຳຕອບຂອງຄຳຖາມທີ່ຕັ້ງໄວ້ ທີມງານຜູ້ສຶກສາຈຶ່ງໄດ້ຕັ້ງຈຸດປະສົງຫຼັກຂອງການສຶກສາໄວ້ 2 ຈຸດປະສົງຄື:

- ສຶກສາສະພາບລວມຂອງການປະກອບການໂຮງແຮມ ແລະ ເຮືອນພັກ ໃນເຂດເທດສະບານເມືອງວັງວຽງ ແຂວງວຽງຈັນ ໃນຊ່ວງການລະບາດຂອງພະຍາດ Covid -19.
- ສຶກສາຜົນກະທົບຂອງການລະບາດຂອງພະຍາດ Covid -19 ຕໍ່ລາຍຮັບຂອງຜູ້ປະກອບການໂຮງແຮມ ແລະ ເຮືອນພັກ ໃນເຂດເທດສະບານເມືອງວັງວຽງ ແຂວງວຽງຈັນ.

## II. ທິດສະດີ ແລະ ບົດຄົ້ນຄວ້າວິທະຍາຍສາດທີ່ກ່ຽວຂ້ອງ

ສຶກສາ "ຜົນກະທົບຂອງການລະບາດຂອງພະຍາດ Covid-19 ຕໍ່ລາຍຮັບຂອງຜູ້ປະກອບການໂຮງແຮມ ແລະ ເຮືອນພັກ ໃນເທດສະບານເມືອງວັງວຽງ, ແຂວງວຽງຈັນ" ຄັ້ງນີ້ໄດ້ທົບທວນແນວຄິດ, ທິດສະດີ ແລະ ບົດຄົ້ນຄ້ວາຕ່າງໆທີ່ກ່ຽວຂ້ອງ ເພື່ອເປັນແນວທາງໃນການສຶກສາບົດນີ້ໃຫ້ສົມບູນ. ທິດສະດີແມ່ນຈະເຊື່ອມໂຍງເຖິງແນວຄິດ ແລະ ວິທີໃນການວິເຄາະຜົນກະທົບຂອງການລະບາດຂອງພະຍາດ Covid-19 ຕໍ່ກັບລາຍຮັບຂອງຜູ້ປະກອບການໂຮງແຮມ ແລະ ເຮືອນພັກ ໃນເທດສະບານເມືອງວັງວຽງ ແຂວງວຽງຈັນ.

### 2.1 ແບບຈຳລອງໂພຣບິດແບບຮຽງລຳດັບ (Ordered Probit model)

ການສຶກສາການປະມານຄ່າແບບຈຳລອງຖົດຖອຍທີ່ມີຕົວປ່ຽນຕາມເປັນຕົວປ່ຽນຫຸ່ນ (Estimation of Regression Model with Dummy Dependent Variables) ເຊັ່ນ: ການເລືອກວິທີໃນການປູກພືດຂອງຊາວກະສິກອນ ,ການເລືອກໃຊ້ຜະລິດຕະພັນທຳຄວາມສະອາດໃບໜ້າ ,ການເລືອກຊື້ໂທລະສັບມືຖື ,ການເລືອກເສັ້ນທາງຂອງຜູ້ຂັບຂີ່ ແລະ ການຕັດສິນໃຈຊື້ສິນຄ້າທາງການກະເສດຂອງຜູ້ບໍລິໂພກ .ຕົວຢ່າງເຫຼົ່ານີ້ເປັນການສຶກສາການຄາດປະມານແບບຈຳລອງຖົດຖອຍທີ່ມີຕົວປ່ຽນຕາມ (Dependent Variables) ເປັນຕົວປ່ຽນຫຸ່ນ ມີຫຼາຍກໍລະນີທີ່ພົບວ່າການປະມານຄ່າແບບຈຳລອງຖົດຖອຍທີ່ມີຕົວປ່ຽນຕາມເປັນຕົວປ່ຽນຫຸ່ນທີ່ມີລັກສະນະເປັນທາງເລືອກຄຸນນະພາບ 2 ທາງເລືອກ (Binary Logistic Regression) ຫຼື ມີລັກສະນະເປັນທາງເລືອກຄຸນນະພາບຫຼາຍກວ່າ 2 ທາງເລືອກ (Multinomial Logistic Regression) ຂອງຕົວປ່ຽນຕາມ (ຊົງສັກ ສີບຸນຈິດ, 2005)

ແບບຈຳລອງແບບຮຽງລຳດັບ (Ordered Probit Model) ເປັນເທັກນິກທາງສະຖິຕິໃນກຸ່ມດຽວກັບສົມຜົນພະຫຸຄູນທີ່ໃຊ້ຈຳລອງແບບຈຳລອງ ແລະ ຫາຄວາມສຳພັນລະຫວ່າງຕົວປ່ຽນຫຼາຍຕົວປ່ຽນທີ່ມີຄ່າຕັ້ງແຕ່ 2 ຂຶ້ນໄປເຊັ່ນດຽວກັບແບບຈຳລອງໂລຈິດແບບຮຽງລຳດັບ ຫຼື ການໃຊ້ແບບຈຳລອງໂພຣບິດຫຼາຍທາງເລືອກ (Multinomial probit model) ໂດຍທີ່ແບບຈຳລອງໂພຣບິດແບບຮຽງລຳດັບ (Ordered Probit Model) ຈະເປັນເຄື່ອງມືທີ່ໃຊ້ໃນການວິເຄາະມີຄວາມເໝາະສົມຕໍ່ການວິເຄາະຕົວປ່ຽນທີ່ມີລະດັບການວັດແບບຮຽງລຳດັບ (Ordinal Level) ເຊັ່ນດຽວກັບແບບຈຳລອງໂລຈິດແບບຮຽງລຳດັບ.

ໂດຍຕົວເລືອກ $y_i$ ທີ່ສັງເກດໄດ້ຄືຜົນຈາກການຕັດສິນໃຈ $y_i$ ມີຄ່າ ,....... ,2 ,1m ໂດຍທີ່ຄວາມຈິງແລ້ວການທີ່ $y_i$ ມີຄ່າເປັນ 1 ຫຼື 2 ຫຼື m ນັ້ນມີໂອກາດທີ່ຈະເກີດຂຶ້ນດ້ວຍຄ່າຄວາມນ່າຈະເປັນ (Probability) ທີ່ຄ່າໜຶ່ງ .ດັ່ງນັ້ນ ,ແບບຈຳລອງທີ່ແທ້ຈິງມີຕົວປ່ຽນຕາມເປັນຕົວປ່ຽນແຝງທີ່ສັງເກດບໍ່ໄດ້ເຊິ່ງອາດຈະກ່າວໄດ້ວ່າສຳລັບໜ່ວຍສັງເກດໃດໆແລ້ວຈະໄດ້:

$$y_i = \text{J ຖ້າ } \mu_{i-1} < y*_i < \mu_j$$

ສຳລັບ $\mu_j$ ທີ່ບໍ່ຮູ້ຄ່າຈະແທນດ້ວຍ $\mu_j$=-α, $\mu_j = 0$ ແລະ $\mu_j$=∞ ຜົນທີ່ຕາມມາຄືຄ່າຄວາມນ່າຈະເປັນທີ່ທາງເລືອກ j ຈະຖືກເລືອກກ່າວຄື: ຄ່າຄວາມນ່າຈະເປັນທີ່ຕົວປ່ຽນແຝງ $y^*_{ji}$ ຢູ່ຊ່ວງເຂດ $\mu_{i-1}$ ແລະ $\mu_j$.

ຖ້າ $\mu_i$ ມີການແຈກຢາຍແບບປົກກະຕິມາດຕະຖານເໝືອນກັນທຸກ i ແລະ ມີຄວາມເປັນອິດສະຫຼະຕໍ່ກັນ (IID: Independent identically distributed) ໂດຍແບບຈຳລອງທີ່ໄດ້ກໍ່ຈະຄືແບບຈຳລອງໂພຣບິດແບບຮຽງລຳດັບເຊິ່ງສາມາດຂຽນແບບຈຳລອງແບບຮຽງລຳດັບໄດ້ດັ່ງນີ້:

$$y^*_{ji} = x'_i\beta + \mu_i$$

$$y_i = 0 \text{ ຖ້າ } y*_i \leq 0$$

$$y_i = 1 \text{ ຖ້າ } 0 < y*_i < \mu_1$$

$$y_i = 2 \text{ ຖ້າ } 0 < y*_i < \mu_2$$

...

$$y_i = \text{J ຖ້າ } \mu_{j-1} < y*_i$$

ເມື່ອ $y*_i$ ແປຄວາມໝາຍວ່າເປັນລະດັບຄວາມເພິ່ງພໍໃຈ ໂດຍສົມຜົນດັ່ງກ່າວຍັງໄດ້ຖືກກຳນົດໃຫ້ 0 ເປັນຄ່າຂັ້ນຕ່ຳ (ນັ້ນຄືໃຫ້ $y*_i \leq 0$) ນອກຈາກນີ້ຍັງຈຳເປັນທີ່ຈະຕ້ອງມີການກຳນົດໃຫ້ກັບຄ່າ $y*_i$ (Normalized Scale $y*_i$) ດ້ວຍ. ດັ່ງນັ້ນ $\mu_i$ ມີການແຈກຢາຍແບບປົກກະຕິມາດຕະຖານ $\mu_{j-1}$ iid N (0,1) ແລ້ວຄວາມນ່າຈະເປັນທີ່ໄດ້ຈະເປັນດັ່ງນີ້:

Prop (y=0|x) = Φ (-x'β)

Prop (y=1|x) = Φ ($\mu_1$ - x'β) – Φ (-x'β)

Prop (y=2|x) = Φ ($\mu_2$ - x'β) – Φ (-x'β)

...

Prop (y=J|x) = 1- Φ ($\mu_{J-1}$ -x'β)

ແລະ ຄວາມນ່າຈະເປັນນັ້ນຈະຕ້ອງເປັນບວກດັ່ງນີ້:

$0<\mu_1<\mu_2<\ldots<\mu_{J-1}$

ເມື່ອ μ ເປັນພາຣາມິເຕີທີ່ບໍ່ຮູ້ຄ່າ ແລະ ຖືກປະມານຄ່າພ້ອມກັບ β ດ້ວຍວິທີ Maximum Likelihood ຄ່າສຳປະສິດ β ຄືຄ່າທີ່ມີຢູ່ໃນແບບຈຳລອງ $y*_i$ ນັ້ນຄືເປັນຄ່າທີ່ສະແດງເຖິງຄວາມສຳພັນກັບຕົວປ່ຽນແຝງ ຫຼື ຄວາມນ່າຈະເປັນ ແລະ ມີລັກສະນະເຊັ່ນດຽວກັບແບບຈຳລອງສອງທາງເລືອກ ໂດຍສົມມຸດໃຫ້ຄ່າ $\beta_k$ ມີຄວາມໝາຍເປັນບວກ ສະແດງວ່າເມື່ອຄ່າຕົວປ່ຽນ $x_{ik}$ ເພີ່ມຂຶ້ນຈະເຮັດໃຫ້ຄ່າ y* ໃນກຸ່ມອື່ນໆເຊັ່ນຄວາມນ່າຈະເປັນທີ່ $y_i = 2$ ຈະເພີ່ມຂຶ້ນເມື່ອຄວາມນ່າຈະເປັນທີ່ $y_i = 0$ ຫຼຸດລົງ ແຕ່ທີ່ໜ້າສັງເກດຜົນກະທົບຕໍ່ກຸ່ມທີ່ຢູ່ເຄິ່ງກາງຈະໃຫ້ຄວາມໝາຍໄດ້ບໍ່ຊັດເຈນນັ້ນຄືຄວາມນ່າຈະເປັນທີ່ $y_i = 1$ ອາດຈະຫຼຸດລົງ ຫຼື ເພີ່ມຂຶ້ນກໍ່ໄດ້.

### 2.2 ບົດຄົ້ນຄວ້າວິທະຍາສາດທີ່ກ່ຽວຂ້ອງ

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (2020) ໄດ້ລາຍງານຜົນໄດ້ຮັບຈາກການສຳຫຼວດຜົນກະທົບຂອງການລະບາດຂອງພະຍາດ covid-19 ຕໍ່ພາກທຸລະກິດໃນ ສປປ ລາວ ໃນຂອບເຂດທົ່ວປະເທດ. ການສຳຫຼວດດັ່ງກ່າວແມ່ນລວມທັງຜູ້ປະກອບການຕ່າງປະເທດ ທີ່ດຳເນີນທຸລະກິດຢູ່ ສປປ ລາວ. ຈາກລາຍງານຜົນການສຳຫຼວດເຫັນວ່າ: ມີເຖິງ 36 ສ່ວນຮ້ອຍຂອງຜູ້ປະກອບການທີ່ເຫັນວ່າ ຕົນເອງມີຄວາມສ່ຽງ 100 ສ່ວນຮ້ອຍ ທີ່ຈະຢຸດເຊົາກິດຈະການ, ຖ້າສົມທຽບກັບຄວາມສ່ຽງດັ່ງກ່າວ ລະຫວ່າງທຸລະກິດທີ່ນຳໂດຍຜູ້ປະກອບການຍິງ ແລະ ຊາຍເຫັນວ່າ ຜູ້ປະກອບການຍິງຄາດວ່າຕົນເອງຈະມີຄວາມສ່ຽງສູງທີ່ຈະຢຸດເຊົາກິດຈະການຫຼາຍຜູ້ຜູ້ປະກອບການທີ່ເປັນເພດຊາຍ. ຖ້າສົມທຽບລະຫວ່າງຜົນກະທົບຂອງການລະບາດຂອງພະຍາດ Covid-19 ຕາມຂະແໜງການເຫັນວ່າ ຂະແໜງການບໍລິການຂົນສົ່ງ ແລະ ສາງສິນຄ້າ, ຂະແໜງການບໍລິການພັກເຊົາ ແລະ ອາຫານ ເຫັນວ່າຕົນເອງມີຄວາມສ່ຽງສູງທີ່ຈະຢຸດເຊົາຫຼາຍກວ່າຂະແໜງການອື່ນ. ສ່ວນຜົນກະທົບດ້ານແຮງງານເຫັນວ່າ ເກືອບ 40 ສ່ວນຮ້ອຍຂອງຜູ້ປະກອບການຄາດວ່າຕົນເອງຈະປົດພະນັກງານອອກເກີນເຄິ່ງໜຶ່ງຂອງຈຳນວນພະນັກງານທັງໝົດທີ່ຕົນເອງມີຢູ່ ໂດຍສະເພາະແມ່ນບັນດາຂະແໜງການທີ່ຕິດພັນກັບຂະແໜງການທ່ອງທ່ຽວເຊັ່ນ: ການບໍລິການທີ່ພັກເຊົາ ແລະ ອາຫານ. ໃນດ້ານຜົນກະທົບຕໍ່ລາຍຮັບຂອງທຸລະກິດ ໃນຊ່ວງໄຕມາດ 1 ປີ 2020 ທຽບໃສ່ໄຕມາາດ 1 ປີ 2019, ເຫັນວ່າ ຜູ້ປະກອບການເຖິງ 27 ສ່ວນຮ້ອຍ ທີ່ມີລາຍຮັບຫຼຸດລົງເກີນ 80 ສ່ວນຮ້ອຍ ເມື່ອທຽບໃສ່ລາຍຮັບປີ 2019,ໂດຍສະເພາະແມ່ນບັນດາຂະແໜງການທີ່ຕິດພັນກັບຂະແໜງການທ່ອງທ່ຽວເຊັ່ນ: ການບໍລິການທີ່ພັກເຊົາ ແລະ ອາຫານ. ນອກຈາກນັ້ນ, ທະນາຄານພັດທະນາອາຊຽນ (ADB) ກໍ່ໄດ້ປະເມີນ ຜົນກະທົບຂອງການລະບາດຂອງພະຍາດ Covid-19 ຕໍ່ຜູ້ປະກອບການທ່ອງທ່ຽວໃນ ສປປ ລາວ ເບື້ອງຕົ້ນ, ເຊິ່ງໄດ້ສຳຫຼວດຜູ້ປະກອບການທີ່ພັກ ແລະ ຮ້ານອາຫານ ປີ 2019 ໃນຈຳນວນ 4 ແຂວງຍອດນິຍົມຂອງນັກທ່ອງທ່ຽວທີ່ມາລາວຄື: ຫຼວງພະບາງ, ວັງວຽງແຂວງວຽງຈັນ, ນະຄອນຫຼວງວຽງຈັນ ແລະ ຈຳປາສັກ. ຜົນການປະເມີນໄດ້ໃຫ້ຮູ້ວ່າ ການລະບາດຂອງພະຍາດ Covid-19ໄດ້ສົ່ງຜົນກະທົບຕໍ່ລາຍຮັບຂອງພາກການທ່ອງທ່ຽວໜັກກ່ອນໝູ່ແມ່ນ ຫຼວງພະບາງ

ແລະ ວັງວຽງ ADB (2020). ໃນຂະນະດຽວກັນ, ທະນາຄານໂລກ ສຳຫຼວດຜົນກະທົບຂອງ Covid-19 ຕໍ່ຄົວເຮືອນໃນ ສປປ ລາວຈຸດປະສົງການສຳຫຼວດຄັ້ງນີ້ແມ່ນເພື່ອໃຫ້ເຫັນຜົນກະທົບຂອງຄົວເຮືອນເຂດຕົວເມືອງ ແລະ ຊົນນະບົດ ໂດຍເລີ່ມເກັບກຳຂໍ້ມູນ ແຕ່ວັນທີ 20 ມິຖຸນາ ຫາ 16 ກໍລະກົດ ປີ 2020 ຂໍ້ມູນໄດ້ຈາກການລົງເກັບຂໍ້ມູນແບບສອບຖາມທາງໂທລະສັບ ໄດ້ຊຸມເອົາກຸ່ມຕົວຢ່າງ 2,500 ຄົວເຮືອນທົ່ວປະເທດ. ຜົນຂອງການສຶກສາຄັ້ງນີ້ປະກອບມີ 4 ຕົວປ່ຽນ ເຂດຕົວເມືອງ, ລະດັບການສຶກສາຕໍ່າກວ່າມັດທະຍົມ ແລະ ສູງກວ່າມັດທະຍົມ ທີ ໂຄວິດມີຜົນກະທົບຕໍ່ສະຖານະການການຈ້າງງານ, ທຸລະກິດຄອບຄົວຂະໜາດນ້ອຍ, ທຸລະກິດຄອບຄົວຂະໜາດກາງ. ຜົນຂອງການສຳຫຼວດເຫັນວ່າ ປະມານ 50 ສ່ວນຮ້ອຍ ຂອງຄົວເຮືອນມີລາຍໄດ້ຫຼຸດລົງລະຫວ່າງເດືອນມີນາ ຫາ ເດືອນ ມິຖຸນາ ປີ 2020, ຜູ້ຕອບແບບສອບຖາມເກືອບ 15 ສ່ວນຮ້ອຍ ມີການປ່ຽນວຽກ ຫຼື ຕົກວຽກລະຫວ່າງ ເດືອນ ມີນາ ຫາ ເດືອນ ມິຖຸນາ ແຮງງານທີ່ມີທັກສະຕໍ່າໄດ້ຮັບຜົນກະທົບສູງກວ່າແຮງງານທີ່ມີທັກສະສູງ ເຊິ່ງເປັນການສູນເສຍງານເກີດຂຶ້ນຢ່າງກ້ວາງຂວາງໃນກຸ່ມຄົນງານກໍ່ສ້າງ , ຂົນສົ່ງ ແລະ ແຮງງານທີ່ເຮັດວຽກຢູ່ໂຮງງານ, ທຸລະກິດປະມານ 8.4 ສ່ວນຮ້ອຍ ຖືກປິດຕົວລົງຊົ່ວຄາວ ແລະ ປິດຕົວຖາວອນໃນເດືອນ ມິຖຸນາ ຫາ ກໍລະກົດ ແລະ ຫຼາຍກວ່າເຄິ່ງໜຶ່ງຂອງພາກທຸລະກິດທີ່ຍັງເປີດຢູ່ມີລາຍໄດ້ຫຼຸດລົງສູງເມື່ອທຽບກັບເດືອນ ກຸມພາ ນອກນັ້ນ ຜົນກະທົບທາງລົບຕໍ່ລາຍຮັບຂອງຄົວເຮືອນປະມານ 70 ສ່ວນຮ້ອຍ ແມ່ນບອກວ່າຮັບຜົນກະທົບມາຈາກຄ່າອາຫານທີ່ເພີ່ມສູງຂຶ້ນ ແລະ 36.5 ສ່ວນຮ້ອຍ ຂອງຄົວເຮືອນທີ່ໄດ້ຮັບຜົນກະທົບຈາກລາຄາອາຫານທີ່ສູງຂຶ້ນແມ່ນໄດ້ຫຼຸດການບໍລິໂພກອາຫານລົງ (Word Bank,2020)

ນອກຈາກບົດລາຍງານຂອງອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດຂ້າງເທິງ, ທີມງານຜູ້ສຶກສາຍັງໄດ້ສຶກສາຈາກບົດຄົ້ນຄວ້າທັງພາຍໃນ ແລະ ຕ່າງປະເທດຈຳນວນໜຶ່ງ ເປັນຕົ້ນແມ່ນ:

Bartik, A. W., et.al (2020) ໄດ້ເຮັດການຄົ້ນຄ້ວາກ່ຽວກັບຜົນກະທົບຂອງການລະບາດຂອງພະຍາດ Covid-19 ທີ່ມີຕໍ່ຜົນໄດ້ຮັບທາງທຸລະກິດຂອງທຸລະກິດຂະໜາດໜ້ອຍ. ການຄົ້ນຄວ້ານີ້, ໄດ້ສຳຫຼວດເອົາຫຼາຍກວ່າ 5,800 ຫົວໜ່ວຍທຸລະກິດໃນເຄື່ອຂ່າຍທຸລະກິດ (Align able business network). ຜົນການສຶກສາພົບວ່າ, ຫົວໜ່ວຍທຸລະກິດຂະໜາດນ້ອຍ 43 ສ່ວນຮ້ອຍ ແມ່ນໄດ້ປິດກິດຈະການຊົ່ວຄາວ ແລະ ໂດຍສະເລ່ຍ 40 ສ່ວນຮ້ອຍຂອງຫົວໜ່ວຍທຸລະກິດ ແມ່ນໄດ້ປົດພະນັກງານຂອງຕົນອອກເກືອບ 50 ສ່ວນຮ້ອຍເມື່ອທຽບໃສ່ເດືອນມັງກອນ ປີ 2019. ການສຶກສານີ້ ຍັງສະແດງໃຫ້ເຫັນເຖິງຄວາມອ່ອນແອທາງດ້ານການເງິນຂອງທຸລະກິດຂະໜາດໜ້ອຍ ເຊິ່ງສະແດງອອກຈາກການໃຊ້ຈ່າຍໂດຍສະເລ່ຍຂອງການດຳເນີນທຸລະກິດມີຄ່າໃຊ້ຈ່າຍຫຼາຍກວ່າ 10,000 ໂດລາສະຫະລັດຕໍ່ເດືອນ, ໃນຂະນະທີ່ເງິນສົດໃນມືມີບໍ່ຮອດເຄິ່ງໜຶ່ງຂອງຈຳນວນດັ່ງກ່າວ.

Noor F., et al 2020 (ໄດ້ສຶກສາຜົນກະທົບຂອງພະຍາດ Covid-19) ຕໍ່ຜູ້ປະກອບການທຸລະກິດຂະໜາດນ້ອຍ :ກໍລະນີສຶກສາ ,ມຸມມອງຂອງຜູ້ປະກອບການໃນການດຳເນີນທຸລະກິດ ແລະ ຍຸດທະສາດການຟື້ນຟູຕົວໃນປະເທດ Malaysia. ຜົນການສຶກສາເຫັນວ່າ ມຸມມອງໃນການດຳເນີນທຸລະກິດຂອງຜູ້ປະກອບການນັ້ນແມ່ນເຫັນຄວາມສຳຄັນຂອງການຂົນສົ່ງ ,Mobile applicationທຸລະກຳການເງິນ ເອເລັກ , ໂຕນິກ ທີ່ຊ່ວຍໃຫ້ທຸລະກິດຂອງເຂົາສາມາດດຳເນີນໄປຕໍ່ໄດ້ ແລະ ເຫັນການຟື້ນຟູທຸລະກິດຫຼັງຈາກການລະບາດຂອງພະຍາດ Covid-19 ທີ່ຄວນເອົາໃຈໃສ່ຄື: 1) ເຮັດໃຫ້ລະບົບຕ່ອງໂສ້ການສະໜອງສັ້ນລົງ ;2) ຜະລິດຜະລິດຕະພັນທີ່ພົ້ນເດັ່ນຂຶ້ນເພື່ອຕອບສະໜອງຄວາມຕ້ອງການຂອງລູກຄ້າໃນປະຈຸບັນ (ລູກຄ້າກຳລັງຊອກຫາອາຫານທີ່ຈຳເປັນ, ຜະລິດຕະພັນທຳຄວາມສະອາດ ແລະ ສຸຂາພິບານ); 3) ນຳໃຊ້ການຕະຫຼາດດິຈິຕອນຜ່ານແອັບພລິເຄຊັນມືຖື ແລະ ສື່ມວນຊົນສັງຄົມເຊັ່ນ: ເຟສບຸກ ແລະ WhatsApp; 4) ສັງລວມການຈັດສົ່ງໃນທຸລະກຳ ສຳລັບການຂາຍສິນຄ້າ; 5) ໄດ້ຮັບການຊຳລະເງິນຜ່ານການໂອນທະນາຄານຫຼື e-wallet.

# III. ວິທີການສຶກສາ ແລະ ລວບລວມຂໍ້ມູນ

## 3.1 ວິທີສຶກສາ

ເພື່ອໃຫ້ໄດ້ມາເຊິ່ງຄຳຕອບຂອງຄຳຖາມ ແລະ ບັນຈຸຕາມ 2 ຈຸດປະສົງຫຼັກທີ່ຕັ້ງໄວ້, ທີມງານຜູ້ສຶກສາໄດ້ນຳໃຊ້ວິທີການສຶກສາໃນຮູບແບບການວິເຄາະແບບພັນລະນາ ເພື່ອຕອບຈຸດປະສົງທີ 1 ເຊິ່ງເປັນການວິເຄາະ, ອະທິບາຍຂໍ້ມູນຕ່າງໆໃນຮູບແບບຕາຕະລາງ, ສ່ວນຮ້ອຍ ແລະ ອັດຕາການປ່ຽນແປງ. ຂໍ້ມມູນທີ່ໃຊ້ໃນການວິເຄາະປະກອບມີ ຂໍ້ມູນທົ່ວໄປຂອງຜູ້ປະກອບການ, ຂໍ້ມູນທົ່ວໄປຂອງລັກສະນະທຸລະກິດ, ຂໍ້ມູນທົ່ວໄປຂອງການກະທົບການລະບາດພະຍາດ Covid-19 ຕໍ່ການດຳເນີນງານຂອງທຸລະກິດ, ຕະຫຼອດຮອດບັນດາມາດຕະການຕ່າງໆ ທີ່ຜູ້ປະກອບການຕ້ອງການຄວາມຊ່ວຍເຫຼືອຈາກລັດຖະບານ.

ນອກຈາກນີ້, ທີມງານຜູ້ສຶກສາຍັງໄດ້ໃຊ້ວິທີການວິເຄາະແບບປະລິມານ ເພື່ອຕອບຈຸດປະສົງທີ 2 ເຊິ່ງເປັນການວິເຄາະໂດຍການນຳໃຊ້ແບບຈຳລອງທາງເສດຖາມິຕິເພື່ອສຶກສາປັດໄຈທີ່ມີຜົນກະທົບຂອງ Covid-19 ຕໍ່ຜົນການປະກອບການຂອງຜູ້ປະກອບການໂຮງແຮມ ແລະ ເຮືອນພັກໃນເຂດເທດສະບານເມືອງວັງວຽງແຂວງວຽງຈັນ. ການວິເຄາະໄດ້ນຳໃຊ້ແບບຈຳລອງໂພຣບິດແບບຮຽງລຳດັບ (Order Probit model) ໃນການປະມານຄ່າຄວາມສ່ຽງຂອງໂອກາດທີ່ຈະເກີດຂຶ້ນໃນແຕ່ລະລະດັບທາງເລືອກຂອງລະດັບຜົນກະທົບຕໍ່ລາຍຮັບລວມທີ່ເກີດຈາກຂອງການລະບາດຂອງພະຍາດ Covid-19 ແລະ ຄາດປະມານສົມຜົນດ້ວຍ (Marginal effects) ສຳລັບຄວາມແຕກຕ່າງລະຫວ່າງ 2 ກຸ່ມຂຶ້ນໄປ ໂດຍການເບິ່ງຜົນກະທົບຂອງຕົວປ່ຽນອິດສະຫຼະຕ່າງໆ ທີ່ມີຕໍ່ແຕ່ລະລະດັບຜົນກະທົບ ດັ່ງສົມຜົນຕໍ່ໄປນີ້: (ອາຣີ ວິບຸນພົງ, 2006)

$$
\begin{aligned}
\text{imp} - \text{covi}d19 &= \beta_0 + \beta_1 \text{gender} + \beta_2 \text{age} + +\beta_3 \text{d}_{\text{edu}} + \beta_4 \text{bus}_{\text{life}} + \beta_5 \text{bus}_{\text{type}} \\
&+ \beta_6 \text{rooms} + \beta_7 \text{business} + \beta_8 \text{dlaoshare} + \beta_9 \text{ river} + \beta_{10} \text{ big}_{\text{road}} \\
&+ \beta_{11} \text{market} + \beta_{12} \text{web}_{\text{agoda}} + \beta_{13} \text{ dstar} + \varepsilon
\end{aligned}
$$

ໂດຍ: Imp–covid-19 ໝາຍເຖິງຜົນກະທົບຂອງໂຄວິດ-19 ເຊິ່ງປະກອບມີ 3 ລະດັບຄື .1 :ກຸ່ມຜູ້ປະກອບການທີ່ສະແດງຄວາມຄິດເຫັນວ່າ ໄດ້ຮັບຜົນກະທົບຈາກການລະບາດຂອງພະບາດ Covid-19 ໃນລະດັບໜ້ອຍ (0-30 ສ່ວນຮ້ອຍ), .2 ກຸ່ມຜູ້ປະກອບການທີ່ສະແດງຄວາມຄິດເຫັນວ່າ ໄດ້ຮັບຜົນກະທົບຈາກການລະບາດຂອງພະບາດ Covid-19 ໃນລະດັບປານກາງ (70-31) ສ່ວນຮ້ອຍ ແລະ 3. ກຸ່ມຜູ້ປະກອບການທີ່ສະແດງຄວາມຄິດເຫັນວ່າ ໄດ້ຮັບຜົນກະທົບຈາກການລະບາດຂອງພະບາດ Covid-19 ໃນລະດັບຫຼາຍ ຫຼາຍກວ່າ 70 (ສ່ວນຮ້ອຍ); Gender ໝາຍເຖິງເພດຂອງຜູ່ປະການ ເຊິ່ງ 1=ຊາຍ ແລະ 0=ຍິງ ;Age ໝາຍເຖິງອາຍຸຂອງຜູ້ປະກອບການເຊິ່ງມີຫົວໜ່ວຍ (ປີ) ;status ໝາຍເຖິງສະຖານະພາບຂອງຜູ້ປະກອບການ ເຊິ່ງ 1=ແຕ່ງງານ ແລະ 0=ໂສດ ແລະ ອື່ນໆ ;Edu ໝາຍເຖິງລະດັບການສຶກສາ ເຊິ່ງ 1=ຈົບສູງກວ່າມັດທະຍົມປາຍຂຶ້ນໄປ ແລະ 0 =ຈົບມັດທະຍົມປາຍລົງມາ ;Bus_life ໝາຍເຖິງໄລຍະການດຳເນີນທຸລະກິດເຊິ່ງມີຫົວໜ່ວຍ (ປີ) ;Bus_type ໝາຍເຖິງຮູບແບບຂອງການດຳເນີນທຸລະກິດ ເຊິ່ງ 1=ທຸລະກິດໃນເຄືອ ແລະ 0=ທຸລະກິດອິດສະຫຼະ ;rooms ໝາຍເຖິງຈຳນວນຫ້ອງພັກຫ້ອງ ເຊິ່ງມີຫົວໜ່ວຍ (ຫ້ອງ) ; business ໝາຍເຖິງລັກສະນະທຸລະກິດເຊິ່ງ 1=ໂຮງແຮມ ແລະ =0ເຮືອນພັກ; dlaoshere ໝາຍເຖິງອັດຕາສ່ວນລູກຄ້າ ເຊິ່ງມີຫົວໜ່ວຍ (ສ່ວນຮ້ອຍ) ;river ໝາຍເຖິງທີ່ຕັ້ງທຸລະກິດຢູ່ຕິດແມ່ນນ້ຳ ເຊິ່ງ 1=ຕິດແມ່ນ້ຳ ແລະ 0=ບໍ່ຕິດແມ່ນ້ຳ ;Big-road ໝາຍເຖິງທຸລະກິດຕັ້ງຢູ່ຕິດທາງໃຫຍ່ ເຊິ່ງ 1=ທຸລະກິດຕິດທາງໃຫຍ່ ແລະ 0=ທຸລະກິດບໍ່ຕິດທາງໃຫຍ່ ;market ໝາຍເຖິງທຸລະກິດຕັ້ງຢູ່ຕິດຕະຫຼາດ ເຊິ່ງ 1=ທຸລະກິດຕັ້ງ

ຢູ່ຕິດຕະຫຼາດ ແລະ 0=ທຸລະກິດບໍ່ຕິດຕະຫຼາດ ;Web-agoda ໝາຍເຖິງທຸລະກິດມີບັນຊີລາຍຊື່ໃນ Web-agoda ເຊິ່ງ 1=ມີບັນຊີລາຍຊື່ໃນ Web-Agoda ແລະ 0=ບໍ່ບັນຊີລາຍຊື່ໃນ Web-agodaແລະ ; dstar ໝາຍເຖິງລະດັບມາດຕະຖານ ເຊິ່ງ 1=ຕິດດາວ ແລະ 0=ບໍ່ຕິດດາວ

### 3.2 ການເກັບຮວບຮວມຂໍ້ມູນ ແລະ ກຸ່ມຕົວຢ່າງ

ຂໍ້ມູນທີ່ໃຊ້ໃນການສຶກສາຄັ້ງນີ້ ແມ່ນຂໍ້ມູນປະຖົມພູມ ເຊິ່ງໄດ້ຈາກການຍາຍແບບສອບຖາມສຳພາດແບບບັງເອີນ ໃຫ້ກັບຜູ້ປະກອບການໂຮງແຮມ ແລະ ເຮືອນພັກ ໃນເຂດເທດສະບານເມືອງວັງວຽງແຂວງວຽງຈັນ ຈຳນວນ 109 ສະບັບ.

## IV. ຜົນການສຶກສາ

### 4.1 ຜົນຂອງການວິເຄາະຂໍ້ມູນ

ຜົນໄດ້ຮັບຈາກການສຶກສາສະພາບລວມຂອງການປະກອບການໂຮງແຮມ ແລະ ເຮືອນພັກ ໃນເມືອງວັງວຽງ ແຂວງວຽງຈັນ. ພົບວ່າ: ຜູ້ປະກອບການໂຮງແຮມ ແລະ ເຮືອນພັກສ່ວນໃຫ່ຍແມ່ນເພດຍິງ ກວມເອົາ 52.29 ສ່ວນຮ້ອຍ, ມີອາຍຸລະຫວ່າງ 36-52 ປີ ກວມເອົາ 67.89 ສ່ວນຮ້ອຍ ແລະ ລະດັບການສຶກສາຜູ້ປະກອບການແມ່ນ ຈົບປະລິນຍາຕີ ກວມເອົາ 36.7 ສ່ວນຮ້ອຍ. ຜູ້ປະກອບການສ່ວນໃຫຍ່ມີປະສົບການໃນການດຳເນີນທຸລະກິດຢູ່ລະຫວ່າງ 7-20 ປີ ກວມເອົາ 49.53 ສ່ວນຮ້ອຍ ແລະ ເປັນຄົນລາວ ກວມເອົາ 99.08 ສ່ວນຮ້ອຍ. ລັກສະນະຂອງທຸລະກິດທີ່ເປັນບ້ານພັກ ກວມເອົາ 71.56 ສ່ວນຮ້ອຍ ແລະ ຮູບແບບການດຳເນີນທຸລະກິດເປັນລັກສະນະອິດສະຫຼະກວມເອົາ 97.25 ສ່ວນຮ້ອຍ ແລະ ລູກຄ້າຫຼັກທີ່ເຂົ້າໃຊ້ບໍລິການແມ່ນເປັນຄົນລາວ ກວມເອົາ 49.54 ສ່ວນຮ້ອຍ. ທຸລະກິດທີ່ມີທີ່ຕັ້ງທຸລະກິດຕິດແຄມທາງໃຫ່ຍ ກວມເອົາ 70.64 ສ່ວນຮ້ອຍ, ຕິດແຄມນໍ້າ ກວມເອົາ 66.97 ສ່ວນຮ້ອຍ, ຕິດຕະຫຼາດ ກວມເອົາ 32.11 ສ່ວນຮ້ອຍ ແລະ ທຸລະກິດທີ່ມີລາຍຊື່ web Agoda ກວມເອົາ 34.86 ສ່ວນຮ້ອຍ.

ສ່ວນຄວາມຄິດເຫັນຂອງຜູ້ປະກອບການຕໍ່ຜົນກະທົບຂອງການລະບາດຂອງພະຍາດ Covid-19 ຂອງທຸລະກິດໃນດ້ານຜົນກະທົບຕໍ່ອັດຕາການເຂົ້າພັກຂອງລູກຄ້າ; ເຫັນວ່າ ຜູ້ປະກອບການ 44.95 ສ່ວນຮ້ອຍໃຫ້ຄວາມຄິດເຫັນໃນດ້ານຜົນກະທົບຕໍ່ອັດຕາການເຂົ້າພັກຂອງລູກຄ້າ ໄດ້ຮັບຜົນກະທົບໃນລະດັບປານກາງ. ຖ້າທຽບເປັນອັດຕາສ່ວນລະຫວ່າງລູກຄ້າທີ່ເປັນຄົນລາວ ແລະ ລູກຄ້າທີ່ເປັນຄົນຕ່າງປະເທດ, ຜູ້ປະກອບການເຫັນວ່າ ອັດຕາການເຂົ້າພັກຂອງລູກຄ້າຕ່າງປະເທດ ແມ່ນໄດ້ຮັບຜົນກະທົບໃນລະດັບຫຼາຍ ກວມເອົາ 91.74 ສ່ວນຮ້ອຍ. ໃນດ້ານຜົນກະທົບຕໍ່ເງິນທຶນ, ຜູ້ປະກອບການ 59.63 ສ່ວນຮ້ອຍ ໃຫ້ຄວາມຄິດເຫັນໃນດ້ານຜົນກະທົບຕໍ່ເງິນທຶນຂອງເຈົ້າຂອງທຸລະກິດໃນລະດັບທີ່ຫຼາຍທີ່ສຸດ. ຜົນກະທົບຕໍ່ລາຍຮັບຂອງຜູ້ປະກອບການ, ຜູ້ປະກອບການ 33.03 ສ່ວນຮ້ອຍ ໃຫ້ຄວາມຄິດເຫັນໃນດ້ານຜົນກະທົບຕໍ່ລາຍຮັບຂອງທຸລະກິດໃນລະດັບທີ່ຫຼາຍທີ່ສຸດ. ສ່ວນມາດຕະການທີ່ຜູ້ປະກອບການຕ້ອງການຄວາມຊ່ວຍເຫຼືອຈາກລັດຖະບານຫຼາຍກວ່າໝູ່ແມ່ນ ການຫຼຸດຄ່ານໍ້າ, ຄ່າໄຟ, ຄ່າໂທລະສັບ ກວມເອົາ 97.25 ສ່ວນຮ້ອຍ, ຮອງລົງມາ ແມ່ນມາດຕະການຜ່ອນຜັນ ແລະ ຍົກເວັ້ນພາສີອາກອນ, ໃຫ້ເງິນອຸດໜູນ ກວມເອົາ 77.98 ສ່ວນຮ້ອຍ.
ການສຶກສາຜົນກະທົບຂອງການລະບາດຂອງພະຍາດ Covid-19 ຕໍ່ລາຍຮັບຜູ້ປະກອບການໂຮງແຮມ ແລະ ເຮືອນພັກໃນເທດສະບານເມືອງວັງວຽງ ແຂວງວຽງຈັນ ໂດຍໃຊ້ແບບຈຳລອງໂພຣບິດແບບຮຽງລຳດັບ (Ordered Probit model) ແລະ ຄາດປະມານຜົນກະທົບສ່ວນເພີ່ມ (Marginal effects)ໃນການປະມານຄ່າຄວາມສ່ຽງຂອງໂອກາດທີ່ຈະເກີດຂຶ້ນໃນແຕ່ລະລະດັບທາງເລືອກຂອງລະດັບຜົນກະທົບຕໍ່ລາຍຮັບລວມ ທີ່ເກີດຈາກຂອງການລະບາດຂອງພະຍາດ Covid-19 ສຳລັບຄວາມແຕກຕ່າງລະຫວ່າງ 2 ກຸ່ມຂຶ້ນໄປ ໂດຍການເບິ່ງຜົນກະທົບຂອງຕົວປ່ຽນອິດສະຫຼະຕ່າງໆ ທີ່ມີຕໍ່ແຕ່ລະລະດັບຜົນກະທົບ ໄດ້ຜົນດັ່ງຕໍ່ໄປນີ້

ຕາຕະລາງທີ 4.1: ການຄາດປະມານສົມຜົນໂດຍ Ordered probit regression

| ຊື່ຕົວປ່ຽນ | ຄວາມໝາຍຕົວປ່ຽນ | *coef* | *std. Err* |
|---|---|---|---|
| *gender* | ເພດ | *0.184* | *0.27* |
| *age* | ອາຍຸ | *0.01* | *0.211* |
| *d_edu* | ລະດັບການສຶກສາ | *-0.158* | *0.379* |
| *bus_life* | ໄລຍະການດຳເນີນທຸລະກິດ | *-0.081*** | *0.037* |
| *bus_type* | ຮູບແບບດຳເນີນງານ(ໃນເຄືອ) | *-1.347** | *0.767* |
| *rooms* | ຈຳນວນຫ້ອງພັກ | *-0.007* | *0.009* |
| *business* | ລັກສະນະທຸລະກິດ(ໂຮງແຮມ) | *1.184*** | *0.542* |
| *dlaoshare* | ອັດຕາສ່ວນລູກຄ້າຄົນລາວ | *0.045* | *0.298* |
| *river* | ຕິດແມ່ນ້ຳ | *0.160* | *0.298* |
| *big_road* | ຕິດທາງໃຫຍ່ | *-1.005**** | *0.365* |
| *market* | ຕິດຕະຫຼາດ | *-0.117* | *0.317* |
| *web_agoda* | ມີບັນຊີໃນ *web Agoda* | *0.811*** | *0.400* |
| *dstar* | ລະດັບມາດຕະຖານ | *0.638* | *0.75.* |

ແຫຼ່ງຂໍ້ມູນ: ໄດ້ຈາກການເກັບຂໍ້ມູນຈາກຜູ້ປະກອບການໂຮງແຮມ ແລະ ເຮືອນພັກໃນເຂດເທດສະບານເມືອງວັງວຽງ (2021)

ຈາກການວິເຄາະຂ້າງເທິງນີ້ສະແດງໃຫ້ເຫັນວ່າ: ຈາກການວິເຄາະດ້ວຍຮູບສົມຜົນ Order probit regression ມີຈຳນວນຂໍ້ມູນທັງໝົດແມ່ນ 109 ຫົວໜ່ວຍ, LB chi2(13) = 45.54 ແລະ Prob > chi2 = 0.0000 ນັ້ນສະແດງວ່າສົມຜົນທີ່ໃຊ້ໃນການຄາດປະມານນັ້ນໃຊ້ໄດ້ດ້ວຍລະດັບຄວາມເຊື່ອໝັ້ນທາງສະຖິຕິເທົ່າກັບ 99 ສ່ວນຮ້ອຍ ແລະ Pseudo $R^2$ = 0.2393 ນັ້ນໝາຍຄວາມວ່າຕົວປ່ຽນອິດສະຫຼະສາມາດອະທິບາຍຕົວປ່ຽນຕາມໄດ້ 23.93 ສ່ວນຮ້ອຍ. ອີງໃສ່ຜົນການຄາດປະມານໃນຕາຕະລາງຂ້າງເທິງ, ການປະເມີນຜົນກະທົບຂອງການລະບາດຂອງພະຍາດ Covid-19 ຕໍ່ລາຍຮັບຂອງຜູ້ປະກອບການໂຮງແຮມ ແລະ ເຮືອນພັກໃນເຂດເທດສະບານເມືອງວັງວຽງ ແຂວງວຽງຈັນ ຈະຫຼາຍ ຫຼື ໜ້ອຍ ໂດຍລວມແລ້ວ ຂຶ້ນກັບໄລຍະການດຳເນີນທຸລະກິດ, ຮູບແບບຂອງການດຳເນີນງານຂອງທຸລະກິດ, ລັກສະນະທຸລະກິດ, ທີ່ຕັ້ງຂອງທຸລະກິດ ແລະ ມີບັນຊີໃນ web Agoda. ແຕ່ວ່າການນຳໃຊ້ຜົນຂອງການຄາດປະມານສົມຜົນ Ordered probit regression ອະທິບາຍບໍ່ຊັດເຈນ. ດັ່ງນັ້ນ, ຈຶ່ງໃຊ້ Marginal effects ມາອະທິບາຍຜົນການຄາດປະມານ. ການສຶກສານີ້ ຈະອີງໃສ່ກຸ່ມ 3 ກຸ່ມລະດັບຜົນກະທົບຂອງການລະບາດເຊັ່ນ: 1. ກຸ່ມຜູ້ປະກອບການທີ່ສະແດງຄວາມຄິດເຫັນວ່າ ໄດ້ຮັບຜົນກະທົບຈາກການລະບາດຂອງພະບາດ Covid-19 ໃນລະດັບໜ້ອຍ (0-30 ສ່ວນຮ້ອຍ), 2. ກຸ່ມຜູ້ປະກອບການທີ່ສະແດງຄວາມຄິດເຫັນວ່າ ໄດ້ຮັບຜົນກະທົບຈາກການລະບາດຂອງພະບາດ Covid-19 ໃນລະດັບປານກາງ (31-70 ສ່ວນຮ້ອຍ) ແລະ 3. ກຸ່ມຜູ້ປະກອບການທີ່ສະແດງຄວາມຄິດເຫັນວ່າ ໄດ້ຮັບຜົນກະທົບຈາກການລະບາດຂອງພະບາດ Covid-19 ໃນລະດັບຫຼາຍ (ຫຼາຍກວ່າ 70 ສ່ວນຮ້ອຍ). ດັ່ງມີລາຍລະອຽດຜົນການຄາດປະມານດັ່ງຕາຕະລາງຕໍ່ໄປນີ້:

ຕາຕະລາງທີ 4.2: ຄາດປະມານຜົນກະທົບສ່ວນເພີ່ມ (Marginal effects)

| ຕົວປ່ຽນ | 1 | 2 | 3 |
|---|---|---|---|
| gender | -0.011 | -0.054 | 0.066 |
| | (0.017) | (0.080) | (0.096) |
| age | -0.0006 | -0.003 | 0.0038 |
| | (0.0018) | (0.006) | (0.007) |
| d_edu | 0.009 | 0.047 | -0.0563 |
| | (0.017) | (0.091) | (0.10) |
| bus_life | 0.005* | 0.024** | -0.029** |
| | (0.002) | (0.011) | (0.013) |
| bus_type | 0.244 | 0.002*** | -0.491** |
| | (0.244) | (0.711) | (0.214) |
| rooms | 0.0004 | 0.002 | -0.002 |
| | (0.0006) | (0.002) | (0.003) |
| business | -0.053* | -0.305*** | 0.358*** |
| | (0.028) | (0.111) | (0.127) |
| dlaoshare | -0.002 | -0.013 | 0.016 |
| | (0.018) | (0.089) | (0.107) |
| river | -0.009 | -0.047 | 0.057 |
| | (0.017) | (0.087) | (0.103) |
| big_road | 0.0473** | 0.268*** | -0.316*** |
| | (0.023) | (0.087) | (0.097) |
| market | 0.0076 | 0.035 | -0.042 |
| | (0.021) | (0.095) | (0.116) |
| web_agoda | -0.043** | -0.226** | 0.270** |
| | (0.024) | (0.101) | (0.116) |
| dstar | -0.027 | -0.175 | 0.202 |
| | (0.023) | (0.108) | (0.200) |

ໝາຍເຫດ: ຄ່າໃນວົງເລັບ()ໝາຍເຖິງ std. Err.; *, **, *** ໝາຍເຖິງລະດັບຄວາມເຊື່ອໝັ້ນທາງສະຖິຕິ 90, 95 ແລະ 99 ສ່ວນຮ້ອຍ ຕາມລະດັບ

ແຫຼ່ງຂໍ້ມູນ: ໄດ້ຈາກການເກັບຂໍ້ມູນຈາກຜູ້ປະກອບການໂຮງແຮມ ແລະ ເຮືອນພັກໃນເຫດສະບານເມືອງວັງວຽງ ຕົວຈິງ 2021

ຈາກຕາຕະລາງຂ້າງເທິງເຫັນວ່າ ລະດັບຜົນກະທົບຂອງການລະບາດຂອງພະຍາດ Covid-19 ຕໍ່ລາຍຮັບຂອງຜູ້ປະກອບການໂຮງແຮມ ແລະ ບ້ານພັກ ໃນເຂດເທດສະບານເມືອງວັງວຽງແຂວງວຽງຈັນ ແມ່ນຂຶ້ນກັບໄລຍະການດຳເນີນທຸລະກິດ, ຮູບແບບການດຳເນີນທຸລະກິດ(ໃນເຄືອ), ລັກສະນະທຸລະກິດ (ໂຮງແຮມ), ທຸລະກິດທີ່ມີທີ່ຕັ້ງຢູ່ຕິດທາງໃຫຍ່ ແລະ ມີຊື່ທຸລະກິດບັນຊີໃນ web Agoda.

- ຖ້າໄລຍະເວລາໃນການດຳເນີນທຸລະກິດຂອງໂຮງແຮມ ແລະ ເຮືອນພັກ, ຫາກເພີ່ມຂຶ້ນ 1 ປີ ໂດຍສົມມຸດໃຫ້ປັດໄຈອື່ນຄົງທີ່ຈະເຮັດໃຫ້ໂອກາດທີ່ ກຸ່ມຜູ້ປະກອບການທີ່ສະແດງຄວາມຄິດເຫັນວ່າ ໄດ້ຮັບຜົນກະທົບຈາກການລະບາດຂອງພະບາດ Covid-19 ໃນລະດັບໜ້ອຍ ເພີ່ມຂຶ້ນ 0.5 ສ່ວນຮ້ອຍ ດ້ວຍລະດັບຄວາມເຊື່ອໝັ້ນໃນທາງສະຖິຕິ 90 ສ່ວນຮ້ອຍ. ໃນຂະນະທີ່, ໂອກາດທີ່ກຸ່ມຜູ້ປະກອບການທີ່ສະແດງຄວາມຄິດເຫັນວ່າ ໄດ້ຮັບຜົນກະທົບຈາກການລະບາດຂອງພະບາດ Covid-19 ໃນລະດັບຫຼາຍຫຼຸດລົງ 2.9 ສ່ວນຮ້ອຍ ດ້ວຍລະດັບຄວາມເຊື່ອໝັ້ນໃນທາງສະຖິຕິ 95 ສ່ວນຮ້ອຍ.

- ຖ້າຮູບແບບການດຳເນີນທຸລະກິດເປັນລັກສະນະທຸລະກິດໃນເຄືອ, ໂດຍສົມມຸດໃຫ້ປັດໄຈອື່ນຄົງທີ່ຈະເຮັດໃຫ້ໂອກາດທີ່ ກຸ່ມຜູ້ປະກອບການທີ່ສະແດງຄວາມຄິດເຫັນວ່າ ໄດ້ຮັບຜົນກະທົບຈາກການລະບາດຂອງພະບາດ Covid-19 ໃນລະດັບປານກາງ ເພີ່ມຂຶ້ນ 0.2 ສ່ວນຮ້ອຍ ເມື່ອທຽບໃສ່ຮູບແບບທຸລະກິດທີ່ເປັນລັກສະນະທຸລະກິດອິດສະຫຼະ ດ້ວຍລະດັບຄວາມເຊື່ອໝັ້ນໃນທາງສະຖິຕິ 99 ສ່ວນຮ້ອຍ. ໃນຂະນະທີ່, ໂອກາດທີ່ກຸ່ມຜູ້ປະກອບການທີ່ສະແດງຄວາມຄິດເຫັນວ່າ ໄດ້ຮັບຜົນກະທົບຈາກການລະບາດຂອງພະບາດ Covid-19 ໃນລະດັບຫຼາຍຫຼຸດລົງ 49.1 ສ່ວນຮ້ອຍ ເມື່ອທຽບໃສ່ຮູບແບບທຸລະກິດທີ່ເປັນລັກສະນະທຸລະກິດອິດສະຫຼະ ດ້ວຍລະດັບຄວາມເຊື່ອໝັ້ນໃນທາງສະຖິຕິ 95 ສ່ວນຮ້ອຍ.

- ຖ້າຮູບແບບການດຳເນີນທຸລະກິດເປັນໂຮງແຮມ, ໂດຍສົມມຸດໃຫ້ປັດໄຈອື່ນຄົງທີ່ຈະເຮັດໃຫ້ໂອກາດທີ່ ກຸ່ມຜູ້ປະກອບການທີ່ສະແດງຄວາມຄິດເຫັນວ່າ ໄດ້ຮັບຜົນກະທົບຈາກການລະບາດຂອງພະບາດ Covid-19 ໃນລະດັບໜ້ອຍ ຫຼຸດລົງ 5.3 ສ່ວນຮ້ອຍ ເມື່ອທຽບໃສ່ຮູບແບບທຸລະກິດທີ່ເປັນເຮືອນພັກ ດ້ວຍລະດັບຄວາມເຊື່ອໝັ້ນໃນທາງສະຖິຕິ 90 ສ່ວນຮ້ອຍ. ໃນຂະນະທີ່, ໂອກາດທີ່ກຸ່ມຜູ້ປະກອບການທີ່ສະແດງຄວາມຄິດເຫັນວ່າ ໄດ້ຮັບຜົນກະທົບຈາກການລະບາດຂອງພະບາດ Covid-19 ໃນລະດັບຫຼາຍເພີ່ມຂຶ້ນ 35.5 ສ່ວນຮ້ອຍ ເມື່ອທຽບໃສ່ຮູບແບບທຸລະກິດທີ່ເປັນເຮືອນພັກ ດ້ວຍລະດັບຄວາມເຊື່ອໝັ້ນໃນທາງສະຖິຕິ 99 ສ່ວນຮ້ອຍ.

- ຖ້າທຸລະກິດມີທີ່ຕັ້ງຕິດທາງໃຫຍ່, ໂດຍສົມມຸດໃຫ້ປັດໄຈອື່ນຄົງທີ່ຈະເຮັດໃຫ້ໂອກາດທີ່ ກຸ່ມຜູ້ປະກອບການທີ່ສະແດງຄວາມຄິດເຫັນວ່າ ໄດ້ຮັບຜົນກະທົບຈາກການລະບາດຂອງພະບາດ Covid-19 ໃນລະດັບໜ້ອຍ ເພີ່ມຂຶ້ນ 4.73 ສ່ວນຮ້ອຍ ເມື່ອທຽບໃສ່ທຸລະກິດມີທີ່ຕັ້ງບໍ່ຕິດທາງໃຫຍ່ ດ້ວຍລະດັບຄວາມເຊື່ອໝັ້ນໃນທາງສະຖິຕິ 95 ສ່ວນຮ້ອຍ. ໃນຂະນະທີ່, ໂອກາດທີ່ກຸ່ມຜູ້ປະກອບການທີ່ສະແດງຄວາມຄິດເຫັນວ່າ ໄດ້ຮັບຜົນກະທົບຈາກການລະບາດຂອງພະບາດ Covid-19 ໃນລະດັບຫຼາຍ ຫຼຸດລົງ 31.6 ສ່ວນຮ້ອຍ ເມື່ອທຽບໃສ່ທຸລະກິດມີທີ່ຕັ້ງບໍ່ຕິດທາງໃຫຍ່ ດ້ວຍລະດັບຄວາມເຊື່ອໝັ້ນໃນທາງສະຖິຕິ 99 ສ່ວນຮ້ອຍ.

- ຖ້າທຸລະກິດທີ່ມີຊື່ໃນບັນຊີ web Agoda, ໂດຍສົມມຸດໃຫ້ປັດໄຈອື່ນຄົງທີ່ຈະເຮັດໃຫ້ໂອກາດທີ່ ກຸ່ມຜູ້ປະກອບການທີ່ສະແດງຄວາມຄິດເຫັນວ່າ ໄດ້ຮັບຜົນກະທົບຈາກການລະບາດຂອງພະບາດ Covid-19 ໃນລະດັບໜ້ອຍຫຼຸດລົງ 4.3 ສ່ວນຮ້ອຍ ເມື່ອທຽບໃສ່ທຸລະກິດທີ່ບໍ່ມີຊື່ໃນບັນຊີ web_agoda ດ້ວຍລະດັບຄວາມເຊື່ອໝັ້ນໃນທາງສະຖິຕິ 95 ສ່ວນຮ້ອຍ. ໃນຂະນະທີ່, ໂອກາດທີ່ກຸ່ມຜູ້ປະກອບການທີ່ສະແດງຄວາມຄິດເຫັນວ່າ ໄດ້ຮັບຜົນກະທົບຈາກການລະບາດຂອງພະບາດ Covid-19 ໃນລະດັບຫຼາຍ ເພີ່ມຂຶ້ນ 27.0 ສ່ວນຮ້ອຍ ເມື່ອທຽບໃສ່ທຸລະກິດທີ່ບໍ່ມີຊື່ໃນບັນຊີ web_agoda ດ້ວຍລະດັບຄວາມເຊື່ອໝັ້ນໃນທາງສະຖິຕິ 95 ສ່ວນຮ້ອຍ.

**4.2 ການອະພິປາຍຜົນ**

ການສຶກສາ "ຜົນກະທົບຂອງການລະບາດຂອງພະບາດ Covid-19 ຕໍ່ກັບລາຍຮັບຂອງຜູ້ປະກອບການໂຮງແຮມ ແລະ ເຮືອນພັກ ໃນເຂດເທດສະບານເມືອງວັງວຽງ ແຂວງວຽງຈັນ" ຄັ້ງນີ້ເຫັນວ່າ ບໍ່ວ່າຈະແມ່ນທຸລະກິດໂຮງແຮມ ຫຼື ເຮືອນພັກ ກໍ່ລ້ວນແຕ່ໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດ Covid-19 ເຊັ່ນກັນ ເຊິ່ງສອດຄ່ອງກັບການລາຍງານຂອງກະຊວງອຸດສະຫະກຳ-ການຄ້າ ແລະ ສະພາການຄ້າແຫ່ງຊາດ

ລາວ (2020), ADB (2020) ແລະ WB (2020) ທີ່ວ່າ ບັນດາທຸລະກິດຕ່າງໆທີ່ປິ່ນອ້ອມຂະແໜງການບໍລິການ ແລະ ທ່ອງທ່ຽວ ແມ່ນໄດ້ຮັບຜົນກະທົບຫຼາຍກວ່າໝູ່ ເປັນຕົ້ນແມ່ນ ທຸລະກິດທີ່ພັກເຊົາ ແລະ ຮ້ານອາຫານ. ນອກຈາກນັ້ນ, ຜົນການສຶກສານີ້ສະທ້ອນໃຫ້ເຫັນວ່າ ລະດັບຜົນກະທົບຂອງການລະບາດຂອງພະບາດ Covid-19 ຕໍ່ລາຍຮັບຂອງຜູ້ປະກອບການໂຮງແຮມ ແລະ ບ້ານພັກ ໃນເຂດເທດສະບານເມືອງວັງວຽງ ແຂວງວຽງຈັນ ແມ່ນຂຶ້ນການໂຄສະນາທຸລະກິດຜ່ານສື່ອອນລາຍ (ທຸລະກິດມີຊື່ໃນບັນຊີ web Agoda) ເຊັ່ນກັນ ເຊິ່ງສອດຄ່ອງກັບການສຶກສາຂອງ Noor F.F, Khairul.,et al (2020) ທີ່ວ່າ ຜູ້ປະກອບການໃຫ້ຄວາມສຳຄັນກ່ຽວກັບໃຊ້ Mobile application ຫຼື ການໂຄສະນາຜ່ານອິນເຕີແນັດ ຈະສາມາດໃຫ້ເຂົາໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດ Covid -19 ຫຼຸດລົງ.

## IV. ສະຫຼຸບ ແລະ ຂໍ້ສະເໜີແນະ

### 4.1 ສະຫຼຸບ

ການສຶກສາ "ຜົນກະທົບຂອງການລະບາດຂອງພະຍາດ Covid-19 ຕໍ່ລາຍຮັບຂອງຜູ້ປະກອບການໂຮງແຮມ ແລະ ເຮືອນພັກ ໃນເຂດເທດສະບານ ເມືອງວັງວຽງ ແຂວງວຽງຈັນ" ຄັ້ງນີ້ ປະກອບດ້ວຍ 2 ຈຸດປະສົງຄື: ສຶກສາສະພາບລວມຂອງການປະກອບການໂຮງແຮມ ແລະ ເຮືອນພັກ ໃນເຂດເທດສະບານເມືອງວັງວຽງ ແຂວງວຽງຈັນ ແລະ ສຶກສາຜົນກະທົບຂອງການລະບາດຂອງພະຍາດ Covid -19 ຕໍ່ລາຍຮັບຂອງຜູ້ປະກອບການໂຮງແຮມ ແລະ ເຮືອນພັກ ໃນເຂດເທດສະບານເມືອງວັງວຽງ ແຂວງວຽງຈັນ. ການສຶກສານີ້ເປັນການສຶກສາທີ່ໃຊ້ຂໍ້ມູນປະຖົມມະພູມ ເຊິ່ງໄດ້ຈາກການສຳພາດຜູ້ປະກອບການໂຮງແຮມ ແລະ ເຮືອນພັກ ໃນເຂດເທດສະບານ ເມືອງວັງວຽງ ແຂວງວຽງຈັນ ຈຳນວນ 109 ຫົວໜ່ວຍ ແລະ ນຳໃຊ້ການຄາດປະມານສົມຜົນໃນຮູບແບບແບບຈຳລອງໂພຣບິດແບບຮຽງລຳດັບ (Ordered Probit model). ຜົນການສຶກສາສາມາດສະຫຼຸບໄດ້ດັ່ງຕໍ່ໄປນີ້:

- ຜູ້ປະກອບການໂຮງແຮມ ແລະ ເຮືອນພັກສ່ວນໃຫ່ຍແມ່ນເພດຍິງ, ມີອາຍຸລະຫວ່າງ 36-52 ປີ, ຜູ້ປະກອບການສ່ວນໃຫຍ່ມີປະສົບການໃນການດຳເນີນທຸລະກິດຢູ່ລະຫວ່າງ 7-20 ປີ. ລັກສະນະຂອງທຸລະກິດທີ່ເປັນບ້ານພັກ ກວມເອົາ 71.56 ສ່ວນຮ້ອຍ ແລະ ຮູບແບບການດຳເນີນທຸລະກິດເປັນລັກສະນະອິດສະຫຼະກວມເອົາ 97.25 ສ່ວນຮ້ອຍ ແລະ ລູກຄ້າຫຼັກທີ່ເຂົ້າໃຊ້ບໍລິການແມ່ນເປັນຄົນລາວ ກວມເອົາ 49.54 ສ່ວນຮ້ອຍ. ທຸລະກິດທີ່ມີທີ່ຕັ້ງທຸລະກິດຕິດແຄມທາງໃຫ່ຍ ກວມເອົາ 70.64 ສ່ວນຮ້ອຍ, ຕິດແຄມນໍ້າ ກວມເອົາ 66.97 ສ່ວນຮ້ອຍ, ຕິດຕະຫຼາດ ກວມເອົາ 32.11 ສ່ວນຮ້ອຍ ແລະ ທຸລະກິດທີ່ມີລາຍຊື່ web Agoda ກວມເອົາ 34.86 ສ່ວນຮ້ອຍ.
- ຄວາມຄິດເຫັນຂອງຜູ້ປະກອບການຕໍ່ຜົນກະທົບຂອງການລະບາດຂອງພະຍາດ Covid-19 ຂອງທຸລະກິດໃນດ້ານຜົນກະທົບຕໍ່ອັດຕາການເຂົ້າພັກຂອງລູກຄ້າແມ່ນຢູ່ໃນລະດັບປານກາງ. ສ່ວນຜົນກະທົບຕໍ່ເງິນທຶນຂອງເຈົ້າຂອງທຸລະກິດ, ຜົນກະທົບຕໍ່ລາຍຮັບຂອງຜູ້ປະກອບການຫຼາຍທີ່ສຸດ. ມາດຕະການທີ່ຜູ້ປະກອບການຕ້ອງການຄວາມຊ່ວຍເຫຼືອຈາກລັດຖະບານຫຼາຍກວ່າໝູ່ແມ່ນ ການຫຼຸດຄ່ານໍ້າ, ຄ່າໄຟ, ຄ່າໂທລະສັບ ກວມເອົາ 97.25 ສ່ວນຮ້ອຍ, ຮອງລົງມາ ແມ່ນມາດຕະການຜ່ອນຜັນ ແລະ ຍົກເວັ້ນພາສີອາກອນ, ໃຫ້ເງິນອຸດໜູນ ກວມເອົາ 77.98 ສ່ວນຮ້ອຍ.

ການປະເມີນຜົນກະທົບຂອງການລະບາດຂອງພະຍາດ Covid-19 ຕໍ່ລາຍຮັບຂອງຜູ້ປະກອບການໂຮງແຮມ ແລະ ເຮືອນພັກ ໃນເຂດເທດສະບານເມືອງວັງວຽງ ແຂວງວຽງຈັນ ຈະຫຼາຍ ຫຼື ໜ້ອຍ ໂດຍລວມແລ້ວ ຂຶ້ນກັບໄລຍະການດຳເນີນທຸລະກິດ, ຮູບແບບຂອງການດຳເນີນຂອງທຸລະກິດ, ລັກສະນະທຸລະກິດ, ທີ່ຕັ້ງຂອງທຸລະກິດ ແລະ ມີບັນຊີໃນ web Agoda.

### 4.2 ຂໍ້ສະເໜີແນະ

ອີງໃສ່ຜົນການສຶກສາຄັ້ງນີ້ ສາມາດໃຫ້ຂໍ້ສະເໜີແນະ ດັ່ງຕໍ່ໄປນີ້:

-ຕໍ່ກັບພາກສ່ວນລັດຖະບານ :ເພື່ອເປັນຫຼຸດຜ່ອນຜົນກະທົບ ລັດຖະບານຄວນໃຊ້ບາງມາດຕະການທີ່ຈຳເປັນ ແລະ ຄິດວ່າສຳຄັນ ເພື່ອເປັນການຫຼຸດຕົ້ນທຶນຂອງຜູ້ປະກອບການ ເຊັ່ນ: ການຫຼຸດຄ່ານ້ຳ, ຄ່າໄຟ, ຄ່າໂທລະສັບ , ນຳໃຊ້ບາງມາດຕະການຜ່ອນຜັນ ແລະ ຍົກເວັ້ນພາສີອາກອນ ຕະຫຼອດຮອດການສະໜອງແຫຼ່ງທຶນຕ່າງໆ.

- ຕໍ່ກັບພາກສ່ວນທຸລະກິດ: ຄວນມີການສ້າງເຄື່ອຂ່າຍທຸລະກິດ ທັງນີ້ເພື່ອເປັນການສ້າງພັນທະມິດທາງທຸລະ ກິດ ແລະ ອັບເດດຂໍ້ມູນຂ່າວສານໄດ້ຢ່າງທັນການ ຈະສາມາດປັບຕົວເອງໄດ້ໄວຂຶ້ນ.

## ເອກະສານອ້າງອີງ


ສີນນະມອນ ລັດຕະນະໂກສິນ. ຄຳເສົາ ລຽງສຸນິນ (2019-2020). ສຶກສາຄວາມສຳພັນລະຫວ່າງລາຍໄດ້ຈາກການທ່ອງທ່ຽວກັບການຂະຫຍາຍຕົວຂອງເສດຖະກິດຂອງ ສປປ ລາວ.

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ. (2020). ສຶກສາຜົນໄດ້ຮັບຈາກການສຳຫຼວດຂອງ Covid-19 ຕໍ່ພາກທຸລະກິດ.

ແສງສຸລີ, (2005). ສຶກສາການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວໃນນະຄອນຫຼວງວຽງຈັນ.

ປານຈິດ ຈິທີນລັນ, ພີລາສິດ ຄຳນວນສີລາປາ, (2013). ໄດ້ສຶກສາຜົນກະທົບການທ່ອງທ່ຽວຕໍ່ປະຊາຊົນເຂດເກາະພະງັນ.

ວັນນະສອນ. (2004). ສຶກສາຜົນກະທົບຈາກການທ່ອງທ່ຽວຕໍ່ວັດທະນະທາສັງຄົມ ແລະ ສະພາບແວດລ້ອມກໍລະນີສຶກສາເມືອງວັງວຽງ ແຂວງວຽງຈັນ.

ອາເກມສີຫານາດ, ແສງທະວີ ເປົ້າແກ້ວ, ເພັດສະຫວັນວົງພະຈັນ.(2012). ສຶກສາຜົນກະທົບຂອງການທ່ອງທ່ຽວຕໍ່ກັບວິຖີຊີວິດຂອງປະຊາຊົນ ບ້ານສະຫວ່າງ ເມືອງວັງວຽງ.

ອຸໄພວັນ ພູມສະເຫີຍ. (2012). ສຶກສາຜົນກະທົບຈາກການທ່ອງທ່ຽວຕໍ່ການສ້າງລາຍໄດ້ຂອງຄົວເຮືອນໃນເຂດຊົນນະບົດແຂວງຫລວງພະບາງ.

Abhari, S., Jalali, A., Jaafar, M., & Tajaddini, R. (2021). The impact of Covid-19 pandemic on small businesses in tourism and hospitality industry in Malaysia. *Journal of Research in Marketing and Entrepreneurship*.

Al-Fadly, A. (2020). Impact of COVID-19 on SMEs and employment. *Entrepreneurship and Sustainability Issues*, *8*(2), 629.

Bartik, A. W., Bertrand, M., Cullen, Z. B., Glaeser, E. L., Luca, M., & Stanton, C. T. (2020). *How are small businesses adjusting to COVID-19? Early evidence from a survey* (No. w26989). National Bureau of Economic Research.

Fabeil, N. F., Pazim, K. H., & Langgat, J. (2020). The impact of Covid-19 pandemic crisis on micro-enterprises: Entrepreneurs' perspective on business continuity and recovery strategy. *Journal of Economics and Business*, *3*(2).

Hasanat, M. W., Hoque, A., Shikha, F. A., Anwar, M., Hamid, A. B. A., & Tat, H. H. (2020). The impact of coronavirus (COVID-19) on e-business in Malaysia. *Asian Journal of Multidisciplinary Studies*, *3*(1), 85-90.

Helble, M., & Fink, A. (2020). Reviving Tourism amid the COVID-19 Pandemic1.

Morgan, P. J., & Trinh, L. Q. (2021). Impacts of COVID-19 on Households in ASEAN Countries and Their Implications for Human Capital Development.

Word Bank. (2020). impact of Covid-19 on households in Lao PDR.

World Tourism Organization (2020), UNWTO World Tourism Barometer, May 2020 – Special focus on the Impact of COVID-19 (Summary), UNWTO, Madrid, DOI: https://doi.org/10.18111/9789284421817.

Yamano, T., Pradhananga, M., Schipani, S., Samson, J. N., Quiao, L., Leuangkhamsing, S., & Maddawin, A. (2020). The Impact of COVID-19 on Tourism Enterprises in the Lao People's Democratic Republic: An Initial Assessment.

https://news.trueid.net/detail/mN5MLdoDnJmN

https://www.possttoday.com/aec/column/522638

https://www.thansettakij.com/content/world/433694